ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ເລກທີ 404/ກປຈ

ນະຄອນຫຼວງວຽງຈັນ, ວັນທີ 9 ເມສາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສໍາລັບການສະໜອງພາຫະນະເປັນປະເພດລົດກະບະ ຈໍານວນ 02 ຄັນ ຄື: ລົດກະບະຂັບເຄື່ອນ 4 ລໍ້ລຸ້ນສູງ 04 ປະຕູ, ເກຍໂອໂຕ້ ຈໍານວນ 01 ຄັນ ແລະ ລົດກະບະ ພິແລນເນີ້ ເກຍໂອໂຕ້ ຈໍານວນ 01 ຄັນ ເພື່ອປະກອບຮັບໃຊ້ວຽກງານບໍລິຫານຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ກະຊວງ ສຶກສາທິການ ແລະ ກິລາ. ກໍານົດເວລາໃນການມອບ-ຮັບລົດແມ່ນພາຍໃນ 30 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 020 55424565, 020 28999891, 020 22042440 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 09 ເມສາ 2026 ຫາ 13 ພຶດສະພາ 2026. ໃນລາຄາ 5,000,000 ກີບ/ຊອງ. ວິທີການຊໍາລະປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນໍາໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 13 ພຶດສະພາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 13 ພຶດສະພາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.
6. ທຸກຊອງປະມູນຕ້ອງມີການຄໍ້າປະກັນດ້ວຍ ແຊັກ (ວີຊ່າ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງການເງິນ
ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ອຸຕະແກ້ວ ແກ້ວດວງສົມ

สแกนด้วย CamScanner